ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ
ຄະນະປະຈໍາ

ເລກທີ 145 /ຄປຈ.ຕສ
ນະຄອນຫຼວງວຽງຈັນ, ວັນທີ 17 / 05 / 21

**ມະຕິ**
**ຂອງຄະນະປະຈໍາສະພາແຫ່ງຊາດ**
**ວ່າດ້ວຍການແຕ່ງຕັ້ງສະມາຊິກສະພາແຫ່ງຊາດ ເຄື່ອນໄຫວໃນຄະນະມິດຕະພາບລັດຖະສະພາ ລະຫວ່າງ**
**ສະພາແຫ່ງຊາດລາວ ແລະ ລັດຖະສະພາ ຂອງບັນດາປະເທດໃນຂົງເຂດອາຊີຕາໃຕ້**

---

- ອີງຕາມການເຫັນດີຂອງກອງປະຊຸມຄັ້ງປະຖົມມະລຶກ ຂອງຄະນະປະຈໍາສະພາແຫ່ງຊາດ ຊຸດທີ IX, ຄັ້ງວັນທີ 21-23 ເມສາ 2021.
- ອີງຕາມໜັງສືສະເໜີຂອງກໍາມາທິການການຕ່າງປະເທດ ສະບັບເລກທີ 79/ກຕທ, ລົງວັນທີ 4/5/2021.

ເພື່ອເສີມຂະຫຍາຍສາຍພົວພັນມິດຕະພາບ ແລະ ການຮ່ວມມືອັນດີ ລະຫວ່າງ ສະພາແຫ່ງຊາດລາວ ແລະ ລັດຖະສະພາ ຂອງບັນດາປະເທດໃນຂົງເຂດອາຊີຕາໃຕ້ (ສ.ອິນເດຍ, ສີລັງກາ, ປາກິດສະຖານ).

**ຄະນະປະຈໍາສະພາແຫ່ງຊາດ ຕົກລົງ:**

**ມາດຕາ 1** ເຫັນດີແຕ່ງຕັ້ງສະມາຊິກສະພາແຫ່ງຊາດ ເຄື່ອນໄຫວໃນຄະນະມິດຕະພາບລັດຖະສະພາ ລະຫວ່າງສະພາແຫ່ງຊາດລາວ ແລະ ລັດຖະສະພາ ຂອງບັນດາປະເທດໃນຂົງເຂດອາຊີຕາໃຕ້ (ສ.ອິນເດຍ, ສີລັງກາ, ປາກິດສະຖານ), ຊຶ່ງປະກອບດ້ວຍບັນດາທ່ານ ດັ່ງນີ້:

1. ທ່ານ ອະນຸພາບ ຕຸນາລົມ, ປະທານສະພາປະຊາຊົນນະຄອນຫຼວງວຽງຈັນ, ສສຊ ເຂດ 1 ນະຄອນຫຼວງວຽງຈັນ, ເປັນປະທານ;
2. ທ່ານ ຄໍາປະສິງ ລາດຊະຈັກ, ຮອງປະທານກໍາມາທິການຍຸຕິທໍາ, ສສຊ ເຂດ 17 ແຂວງອັດຕະປື, ເປັນຮອງປະທານ;
3. ທ່ານ ອຸ່ຄໍາ ຕຸລາພັນ, ສສຊ ເຂດ 2 ແຂວງຜົ້ງສາລີ, ເປັນຄະນະ;
4. ທ່ານ ຈັນທະສຸລິນ ໝັ້ນປະດິດ, ສສຊ ເຂດ 3 ແຂວງຫຼວງນໍ້າທາ, ເປັນຄະນະ;
5. ທ່ານ ຄໍາມະນີ ໄຊດວງຕາ, ສສຊ ເຂດ 4 ແຂວງອຸດົມໄຊ, ເປັນຄະນະ;
6. ທ່ານ ທອງໄສ ອິນທິແສງ, ສສຊ ເຂດ 13 ແຂວງສະຫວັນນະເຂດ, ເປັນຄະນະ;

7. ທ່ານ ສາຍສະໝອນ ອິນທິເສນ, ສສຊ ເຂດ 14 ແຂວງສາລະວັນ, ເປັນຄະນະ;

8. ທ່ານ ຈັນທະບູນ ສຸກອາລຸນ, ສສຊ ເຂດ 15 ແຂວງຈຳປາສັກ, ເປັນຄະນະ;

9. ທ່ານ ນາງ ພອນມະນີ ຂຽນໄຊຍະວົງ, ສສຊ ເຂດ 17 ແຂວງອັດຕະປື, ເປັນຄະນະ;

10. ທ່ານ ພົທ. ວິໄຊທໍ່ ເພຍຫຼວງຈິ່ງເລີ, ສສຊ ເຂດ 18 ແຂວງໄຊສົມບູນ, ເປັນຄະນະ.

**ມາດຕາ** 2 ບັນດາສະມາຊິກສະພາແຫ່ງຊາດ, ບັນດາກຳມາທິການ, ຄະນະເລຂາທິການ ແລະ ພາກສ່ວນທີ່ກ່ຽວຂ້ອງຂອງສະພາແຫ່ງຊາດ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດມະຕິຕົກລົງສະບັບນີ້ ເປັນຢ່າງດີ.

**ມາດຕາ** 3 ມະຕິຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ຄະນະປະຈຳສະພາແຫ່ງຊາດ**

**ປະທານ**

ປະທານສະພາແຫ່ງຊາດ

**ປອ ໄຊສົມພອນ ພົມວິຫານ**